# ປະກາດຮັບສະໝັກນັກສຶກສາຝຶກງານ

# ແລະ ອາສາສະໝັກເຜີຍແຜ່ຄວາມຮູ້ LSX SEEDS

ຕະຫຼາດຫຼັກຊັບລາວ (ຕລຊລ) ເປີດຮັບສະໝັກນັກສຶກສາຝຶກງານ ເພື່ອສ້າງໃຫ້ນັກສຶກສາມີຄວາມຮູ້ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບວຽກງານຕະຫຼາດທຶນ ແລະ ຂັ້ນຕອນການດຳເນີນງານຂອງຕະຫຼາດຫຼັກຊັບລາວ; ພ້ອມດຽວກັນນັ້ນນັກສຶກສາຍັງຈະໄດ້ຮັບໂອກາດຝຶກທັກສະ ແລະ ຄວາມສາມາດໃນການບັນຍາຍ ແລະ ເຮັດກິດຈະກຳຕ່າງໆ ໂດຍການເປັນອາສາສະໝັກເຜີຍແຜ່ຄວາມຮູ້ **LSX SEEDS** ຂອງຕະຫຼາດຫຼັກຊັບລາວເພື່ອຊ່ວຍວຽກງານຕະຫຼາດທຶນ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນໃຫ້ມວນຊົນໄດ້ຢ່າງຖືກຕ້ອງ.

## I. ເງື່ອນໄຂຜູ້ສະໝັກ

- ເປັນນັກສຶກສາທີ່ກຳລັງສຶກສາຢູ່ມະຫາວິທະຍາໄລ / ວິທະຍາໄລ ປີ 2 ຂຶ້ນໄປ
- ມີໄຫວພິບດີ, ມີຄວາມກະຕືລືລົ້ນ, ວ່ອງໄວ ແລະ ຫ້າວຫັນໃນການເຮັດວຽກ
- ມີຈິດໃຈອາສາສະໝັກ ແລະ ມີອັດທະຍາໄສດີ
- ສາມາດສື່ສານເປັນພາສາອັງກິດໄດ້ໃນລະດັບປານກາງຂຶ້ນໄປ

## II. ຂັ້ນຕອນການສະໝັກເຂົ້າຝຶກງານ ແລະ ເປັນອາສາສະໝັກເຜີຍແຜ່ຄວາມຮູ້ ທີ່ ຕລຊລ

- ປະກອບໜັງສືສະເໜີຂໍສົ່ງນັກສຶກສາລົງຝຶກງານຈາກມະຫາວິທະຍາໄລ / ວິທະຍາໄລ
- ສຳເນົາບັດນັກສຶກສາ
- ແບບຟອມສະໝັກລົງຝຶກງານ ແລະ ເປັນອາສາສະໝັກ ຕະຫຼາດຫຼັກຊັບລາວ
- ໃບນຳສົ່ງ (ກໍລະນີໄດ້ຮັບການຕອບຮັບຮຽບຮ້ອຍແລ້ວ)

## III. ສິ່ງທີ່ນັກສຶກສາຈະໄດ້ເຮັດ

- ລົງຝຶກງານຕົວຈິງກັບບັນດາພະແນກໃນຕະຫຼາດຫຼັກຊັບລາວ ເພື່ອຮຽນຮູ້ກ່ຽວກັບວຽກງານຕະຫຼາດທຶນ ແລະ ການດຳເນີນງານຂອງຕະຫຼາດຫຼັກຊັບລາວ
- ຮ່ວມກັນກະກຽມ ແລະ ຈັດງານເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນ ທີ່ຕະຫຼາດຫຼັກຊັບລາວ
- ຮ່ວມເຮັດກິດຈະກຳອື່ນໆທີ່ກ່ຽວຂ້ອງກັບຕະຫຼາດທຶນ

## IV. ສິ່ງທີ່ນັກສຶກສາຈະໄດ້ຮັບ

- ໃບຢັ້ງຢືນການຝຶກງານ ແລະ ອາສາສະໝັກ ຕະຫຼາດຫຼັກຊັບລາວ
- ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ
- ປະສົບການເຮັດວຽກອາສາສະໝັກ ແລະ ທັກສະໃນການເປັນນັກບັນຍາຍ
- ໂອກາດໃນການເກັບກ່ຽວຂໍ້ມູນ ເພື່ອກຽມຄວາມພ້ອມໃນການຂຽນບົດວິທະຍານິພົນ
- ໂອກາດເປັນອາສາສະໝັກງານ Investment Gateway - IG 2017 ຂອງຕະຫຼາດຫຼັກຊັບລາວ
- ໂອກາດໃນການສະໝັກເຂົ້າເຮັດວຽກຮ່ວມກັບບໍລິສັດລະດັບແນວໜ້າຂອງ ສປປ ລາວ ໃນພາຍໜ້າ

## ປິດຮັບສະໝັກວັນທີ 27 ມີນາ 2017

ດາວໂຫຼດແບບຟອມສະໝັກໄດ້ທີ່ **ເວັບໄຊທ໌:** www.lsx.com.la ແລະ Facebook Page: LSXInvestmentGateway

**ຍື່ນແບບຟອມສະໝັກ ຫຼື ສອບຖາມເພີ່ມຕື່ມໄດ້ທີ່:**

ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ໂທລະສັບ: 020 5555 2725, 020 5555 8983, 020 2222 7834